



# ພຣະຄຸນເໜືອຄວາມຄາດໝາຍ

ບົດຮຽນທີ 2 ສໍາລັບສະບາໂຕທີ 11 ຕຸລາ , 2025







"ເພາະມີຄວາມເຊື່ອແບບ
ນີ້ ຣາຮາບຍິງໂສເພນີຈຶ່ງ
ບໍ່ຈິບຫາຍໄປພ້ອມກັບຄົນ
ເຫລົ່ານັ້ນທີ່ບໍ່ເຊື່ອຟັງ
ເພາະນາງໄດ້ຕອນຮັບ
ພວກນັກສືບສອດແນມ
ເປັນຢ່າງດີ"

(ເຮັບເຣີ 11:31)

ຊາວຄານາອານໄດ້ລະເມີດຂອບເຂດດິນແດນແຫ່ງພຣະຄຸນ. ດ້ວຍເຫດນີ້, ພຣະເຈົ້າຈຶ່ງສັ່ງຊາວອິດສະຣາເອນວ່າ: ຈົ່ງເຂົ້າໄປ ແລ້ວຂ້າໃຫ້ໝົດທຸກຄົນ, ຍຶດເອົາຊັບສົມບັດຕ່າງໆຂອງພວກເຂົາ

ຢ່າງໃດກໍ່ຕາມ, ຍັງມີຄົນຊາວຄານາອານທີ່ຍັງບໍ່ໄດ້ລະເມີດເຂດພົ້ນແດນແຫ່ງພຣະຄຸນເຫລົ່ານັ້ນ. ທຸກຄົນທີ່ໄດ້ເຕັມໃຈຍອມຮັບເອົາພຣະຄຸນທີ່ພຣະເຈົ້າຊົງປະທານໃຫ້ ລ້ວນແຕ່ໄດ້ຮັບການຊ່ວຍເຫລືອໃຫ້ລອດພົ້ນຈາກການຖືກທຳລາຍລ້າງ.





- **ພຣະຄຸນສຳລັບຊາວອິດສະຣາເອນ(ຢຊ 2:1, 22-24):**
  - ໂອກາດຄັ້ງທີສອງ
- **ພຣະຄຸນສຳລັບ ນ.ຣາຮາບ (ຢຊ 2:2-21):**
  - ຄວາມເຊື່ອເທົ່າເມັດຜັກກາດ
  - ພັນທະສັນຍາທີ່ແຜ່ໄປເຖິງຣາຮາບ
- **ພຣະຄຸນສຳລັບຊາວກິເບໂອນ (ຢຊ 9):**
  - ທູດທີ່ຫລອກລວງ
  - ພຣະພອນ ແລະ ຄຳສາບແຊ່ງ

# ພຣະຄຸນສຳລັບຊາວອິດສະຣາເອນ (ປຊ 2:1, 22-24)



# ໂອກາດຄັ້ງທີ 2

"ແລ້ວໂຢຊວຍລູກຊາຍຂອງນູນ ກໍ່ໄດ້ສົ່ງສອດແນມສອງຄົນຈາກຄ້າຍພັກທີ່ຊິດຕີມ ພ້ອມທັງສັ່ງໃຫ້ພວກເຂົາໄປສຳຫລວດເບິ່ງດິນແດນການາອານຢ່າງລັບໆ ໂດຍສະເພາະແລ້ວແມ່ນຕົວເມືອງເຢຣິໂກ' " (ຢຊ 2:1)



ຕອນທີ່ໂມເຊສົ່ງສາຍລັບໄປສຳຫຼວດແຜ່ນດິນຄານາອານ, ປະຊາຊົນໄດ້ປະຕິເສດທີ່ຈະເຂົ້າໄປ. ສີ່ສິບປີຕໍ່ມາ, ໄດ້ສົ່ງສາຍລັບໄປອີກ, ແຕ່ເທື່ອນີ້ບໍ່ຄືແຕ່ກ່ອນ

| ສາຍລັບທີ່ຖືກສົ່ງອອກໄປ | |
|---|---|
| ສາຍລັບທົ່ວໄປ (12 ຄົນ) | ສາຍລັບແບບຄວາມລັບ (2 ຄົນ) |

| ການດຳເນີນງານຂອງຜູ້ສອດແນມ | |
|---|---|
| 40 ມື້ໃນການກວດສອບ | 3 ມື້ໃນການຫລົບລີ້ |

| ການລາຍງານຜົນຂອງຜູ້ສອດແນມ | |
|---|---|
| ພວກເຂົາບອກດ້ານລົບໃຫ້ຟັງ | ພວກເຂົາໜູນໃຈໂຢຊວຍ |

ເຖິງວ່າຄົນລຸ້ນໃໝ່ຈະລົ້ມເຫລວຢ່າງໜ້າອາໜາດໃຈເມື່ອຜະເຊີນກັບການລໍ້ລວງຂອງບາລາອາມ ແຕ່ພຣະເຈົ້າກໍ່ໄດ້ປະທານໂອກາດຄັ້ງທີ 2 ໃຫ້ກັບພວກເຂົາ (ຈບຊ. 25:1-3, 31:16; ຢຊ. 2:1).

ເທື່ອນີ້ບໍ່ມີພວງໝາກອາງຸ່ນ, ບໍ່ມີໝາກໄມ້ຈາກແຜ່ນດິນ, ມີພຽງເລື່ອງລາວແຫ່ງຄວາມເຊື່ອ. (ຂອງຣາຮາບ), ທີ່ກະຕຸ້ນໃຫ້ອິດສະຣາເອນ ຄອບຄອງແຜ່ນດິນແຫ່ງພັນທະສັນຍາ.



# ພຣະຄຸນສຳລັບ ຣາ ຣາບ

# (ຢຊ 2:2-21)



# ຄວາມເຊື່ອຂອງເມັດຜັກກາດ

"ເພາະຄວາມເຊື່ອແບບນີ້ ຣາຮາບຍິງໂສເພນີ ຈຶ່ງບໍ່ຈິບຫາຍໄປພ້ອມກັບຄົນເຫລົ່ານັ້ນທີ່ບໍ່ເຊື່ອຟັງ ເພາະນາງໄດ້ຕ້ອນຮັບພວກນັກສືບສອດແນມເປັນຢ່າງດີ" (ຮບ 11:31)



ຄວາມເຊື່ອຂອງຣາຮາບມີພື້ນຖານມາຈາກຫຍັງ? (ຢຊ. 2:9-11)?

ສັງເກດໄດ້ວ່າ ນ.ຣາຮາບໄດ້ກ່າວເຖິງເຫດການທີ່ທຸກໆຄົນໄດ້ຮູ້ມາກ່ອນ, ເຊັ່ນການຂ້າມທະເລແດງ. ໃນຂະນະທີ່ທຸກຄົນຢ້ານກົວພຣະເຈົ້າຂອງຊາວເຮັບເຣີນັ້ນ ນ.ຣາຮາບໄດ້ເລືອກທີ່ຈະລີ້ໄພຢູ່ໃຕ້ພະຫັດຂອງພຣະອົງ (ຢຊ. 2:12-13).

ຄວາມເຊື່ອທີ່ຫາກໍ່ເລີ່ມຕົ້ນຂອງນາງ ບໍ່ໄດ້ບົ່ງບອກເຖິງຄວາມເຂົ້າໃຈໃນພຣະປະສົງທີ່ພຣະເຈົ້າມີໃນຕອນເລີ່ມຕົ້ນ, ນາງໄດ້ເຮັດສຸດຄວາມສາມາດເພື່ອຊ່ວຍເຫລືອຜູ້ສອດແນມ ແລະ ການຊ່ວຍເຫລືອນັ້ນກໍ່ມາຮອດຄອບຄົວຂອງນາງເຊັ່ນກັນ.

ຄວາມຮູ້ຈະຕາມມາພາຍຫລັງການຮັບເຊື່ອສະເໝີ

ພຣະຄຳພີໄດ້ຊື່ນຊົມໃນການຕັດສິນໃຈຂອງນາງ; ສຳລັບໄຫວພິບທີ່ນາງໄດ້ປະຕິບັດຕໍ່ຄົນຂອງພຣະເຈົ້າ; ບໍ່ວ່າຈະເປັນຄຳເວົ້າ ຫລື ການກະທຳ (ຢກບ 2:25).

ຣາຮາບ ເປັນເໝືອນຕົວຢ່າງທີ່ຈະເກີດຂຶ້ນກັບຊາວເມືອງເຢຣີໂກທຸກຄົນ ທີ່ຍອມມອບຖວາຍຕົນເອງຕໍ່ພຣະເຈົ້າ.

# ພັນທະສັນຍາທີ່ແຜ່ໄປເຖິງຣາຮາບ

"ຖ້າຜູ້ໃດອອກຈາກເຮືອນໄປ ລາວຈະຕ້ອງຕາຍເພາະຄວາມຜິດຂອງຕົນເອງ, ພວກຂ້ອຍຈະບໍ່ຮັບຜິດຊອບ ແຕ່ຖ້າຜູ້ໃດຜູ້ໜຶ່ງທີ່ຢູ່ໃນເຮືອນນຳເຈົ້າຖືກທຳຮ້າຍ ແລ້ວພວກເຂ້ອຍກໍຈະເປັນຜູ້ຮັບຜິດຊອບ" (ຢຊ 2:19)

ເຫດຜົນຂອງນາງຣາຮາບນັ້ນເປັນຕາຕົກໃຈຫລາຍ: ຂ້ອຍໄດ້ເຮັດດ້ວຍຄວາມເມດຕາ [*hesed*] ແລະ ຊ່ວຍພວກທ່ານໃຫ້ລອດ; ບັດນີ້ ຈົ່ງປະຕິບັດດ້ວຍຄວາມເມດຕາ ແລະ ຊ່ວຍພວກເຮົາ ແລະ ຍາດຕິພີ່ນ້ອງຂອງພວກເຮົາໃຫ້ລອດພົ້ນດ້ວຍ (ຢຊ. 2:12-13).

| ອິດສະຣາເອນໃນພິທີປັດສະຄາ | ຣາຮາບ ໃນເຢຣິໂກ |
| --- | --- |
| ເອົາເລືອດມາທາທັບປະຕູວົງກົບ (ອພຍ. 12:7) | ເອົາເຊືອກສີແດງມາຜູກໃສ່ປ່ອງຢ້ຽມ (ຢຊ. 2:18) |
| ຖ້າພວກເຂົາອອກໄປຂ້າງນອກ ແມ່ນຈະຕາຍ (ອພຍ. 12:13) | ຖ້ານາງອອກໄປຂ້າງນອກ ນາງຈະຕາຍ (ຢຊ. 2:19) |



ເຖິງວ່າ ນາງຣາຮາບຈະບໍ່ໄດ້ຕະໜັກເຖິງເຫດການທີ່ຈະເກີດຂຶ້ນວ່າຈະເປັນໃນຮູບແບບໃດ, ແຕ່ນາງກໍ່ໄດ້ຂໍໃຫ້ປະຕິບັດຕໍ່ນາງ ເໝືອນກັບທີ່ພຣະເຈົ້າຊົງປະຕິບັດຕໍ່ພວກເຂົາຊາວອິດສະຣາເອນ [*hesed*] (ພບຍສ. 7:12).



ຜູ້ສອດແນມໄດ້ຂໍໃຫ້ນາງປະຕິບັດຕາມເງື່ອນໄຂທີ່ຄ້າຍຄືກັນກັບທີ່ໄດ້ເກີດຂຶ້ນໃນປະເທດເອຢິບ, .
ດ້ວຍວິທີນີ້ ນາງຈຶ່ງຖືກລວມຢູ່ໃນພັນທະສັນຍາຂອງພຣະເຈົ້າກັບຊາວອິດສະຣາເອນ



# ພຣະຄຸນສຳລັບຊາວ
# ກິເບໂອນ
# (ປຊ 9)



# ທູດທີ່ຖືກຫລອກລວງ

"ແລ້ວພວກເຂົາກໍ່ໄປຫາໂຢຊວຍແລະຊາວອິດສະຣາເອນ ທີ່ຄ້າຍພັກຂອງເມືອງກິນການ ແລະເວົ້າວ່າ ພວກຂ້ານ້ອຍເດີນທາງມາຈາກດິນແດນ ໄກ ແລະ ຢາກຂໍເຮັດຂໍ້ຕົກລົງກັບພວກທ່ານ' " (ຢຊ 9:6)

## ສັງເກດຄວາມຄ້າຍຄື ແລະ ຄວາມແຕກຕ່າງລະຫວ່າງຣາຮັບ ແລະ ກິເບໂອນ:




| ອົງປະກອບຂອງຄວາມເຊື່ອ | ຣາຮາບ | ຊາວກິເບໂອນ |
|---|---|---|
| ພື້ນຖານ | ໄດ້ຍິນ (2:10) | ໄດ້ຍິນ (9:3) |
| ຄວາມໝາຍ | ຕົວະ (2:4-5) | ຕົວະ (9:4) |
| ເປົ້າໝາຍ | ເພື່ອເອົາໂຕລອດ (2:13) | ເພື່ອເອົາໂຕລອດ (9:24) |
| ຜົນທີ່ເກີດຂຶ້ນທັນທີ | ຖືກປົດປ່ອຍ (6:23) | ຖືກປົດປ່ອຍ (9:26) |
| ຜົນທີ່ເກີດຂຶ້ນໄລຍະຍາວ | ເປັນປະຊາກອນທີ່ສົມບູນ(6:25) | ຖືກຮັບເປັນຄົນຮັບໃຊ້ (9:27) |

ຣາຮາບໄດ້ຕົວະແບບເຕັມໃຈ ເພື່ອປົກປ້ອງຜູ້ສອດແນມ, ແຕ່ຊາວກິເບໂອນແມ່ນຕັ້ງໃຈ ຫລອກລວງ ໂດຍໃຊ້ເລ້ລ່ຽມ ຄ້າຍຄື: (ປຖມກ 3:1). ຍິ່ງໄປກວ່ານັ້ນ, ຜູ້ນຳຂອງອິດ ສະຣາເອນໄດ້ລົ້ມເຫລວເພາະບໍ່ປຶກສາຫາລືກັບພຣະເຈົ້າ (ຢຊ. 9:14).

ສິ່ງນີ້ເຮັດໃຫ້ພວກເຂົາຕົວຢູ່ໃນພາວະ ກືນບໍ່ເຂົ້າ, ຄາຍບໍ່ອອກ: ຈະທຳລາຍ ຊາວກິເບໂອນ ຫລື ເຄົາລົບຄຳ ສາບານຕໍ່ພຣະເຈົ້າ? (ຢຊ. 9:18).







# ພຣະພອນ ແລະ ຄຳສາບແຊ່ງ

**“ຍ້ອນພວກເຈົ້າໄດ້ເຮັດເຊັ່ນນີ້ ພວກເຈົ້າຈຶ່ງຖືກສາບແຊ່ງ ຄົນຂອງພວກເຈົ້າຈະເປັນຄົນຮັບໃຊ້ເລື້ອຍໄປ ພວກເຈົ້າຈະຕ້ອງຕັດຟືນ ແລະ ຕັກນ້ຳ ສຳລັບວິຫານຂອງພຣະເຈົ້າຂອງພວກເຮົາ” (ຢຊ 9:23)**

ຊາວອິດສະຣາເອນໄດ້ສາບານກັບຜູ້ນຳຂອງເຜົ່າ ກິເບໂອນ, ເກຟີຣາ, ເບເອໂຣດ ແລະ ກີຣີອາດເຢອາຣິມ ວ່າຈະບໍ່ຂ້າພວກເຂົາ ແລະ ພວກເຂົາກໍ່ບໍ່ໄດ້ຂ້າຄົນພວກນັ້ນ, ແຕ່ການໄວ້ຊີວິດຊາວກິເບໂອນ ເປັນການຝ່າຝືນຄຳສັ່ງຂອງພຣະເຈົ້າ ເພາະພະອົງຊົງສັ່ງໃຫ້ຢ່າໄວ້ຊີວິດຜູ້ໃດຜູ້ໜຶ່ງ(ພບຍສ. 7:1-2). (ຢຊ. 9:19; Ps. 15:4b). ບັນຫາອັນຕັດສິນໃຈຍາກແບບນີ້ ຈະແກ້ໄຂແບບໃດ?

ຊີວິດຂອງພວກເຂົາໄດ້ຮັບການໄວ້ຊີວິດ ແຕ່ໄດ້ຮັບການສາບແຊ່ງແທນ (ຢຊ. 9:20-23). ຄຳສາບແຊ່ງກໍ່ຄື ຈະຕ້ອງເປັນຄົນຮັບໃຊ້ຈາກລຸ້ນສູ່ລຸ້ນ. ແຕ່ກໍ່ເປັນເຫດໃຫ້ພວກເຂົາມີຄວາມສຳພັນໃກ້ຊິດກັບປະຊາຊົນຂອງພຣະເຈົ້າ, ເຊິ່ງບໍ່ສາມາດແຍກອອກຈາກກັນໄດ້ (ນຣມຢ. 7:6, 25).

ຍິ່ງໄປກວ່ານັ້ນ, ການເປັນຄົນຕັກນ້ຳ ແລະ ຄົນຕັດໄມ້ ເພື່ອວຽກງານຂອງພຣະອົງນັ້ນ ເຮັດໃຫ້ພວກເຂົາໄດ້ຕິດຕໍ່ກັບພຣະເຈົ້າຕະຫລອດເວລາ, ດ້ວຍພຣະຄຸນຂອງພຣະເຈົ້າ ຄຳສາບແຊ່ງກໍ່ກາຍເປັນພຣະພອນ. ໃນພຣະທຳ ເອເຊກຽນ 33:11 ກ່າວວ່າ:. ເຮົາຈະບໍ່ດີໃຈເມື່ອເຫັນຄົນບາບຜູ້ໜຶ່ງຕາຍໄປ, ເຮົາຈະດີໃຈຫລາຍກວ່າ ເມື່ອເຫັນລາວເຊົາເຮັດບາບ ແລະ ມີຊີວິດຢູ່.





“ຊົນຊາດອິດສະຣາເອນຈະຕ້ອງຄອບຄອງດິນແດນທັງໝົດທີ່ພຣະເຈົ້າຊົງກຳນົດໄວ້. ຊົດຊາດທີ່ປະຕິເສດການນະມັດສະການແລະການຮັບໃຊ້ພຣະເຈົ້າຜູ້ທ່ຽງແທ້ ຈະຕ້ອງຖືກຂັບໄລ່ອອກໄປ. ແຕ່ພຣະເຈົ້າຊົງມີພຣະປະສົງທີ່ຈະໃຫ້ມະນຸດຖືກດຶງກັບຄືນມາຫາພຣະອົງ. ໂດຍການສຳແດງພຣະລັກສະນະຂອງພຣະອົງຜ່ານທາງຊາວອິດສະຣາເອນ ແລະ ຄຳເຊີນໃຫ້ເຂົ້າມາຫາພຣະອົງຈະຖືກສົ່ງອອກໄປທົ່ວໂລກ.. [...] ຜູ້ທີ່ເປັນຄ້າຍຄືກັບ ນາງຣາຮາບ ແລະ ຊາວຄານາອານ, ນາງຣຸດ ແລະ ຊາວໂມອາບ ຈະຕ້ອງລວມໂຕກັນກັບນາງໆຊາດ, ຊົນຊາດທີ່ພຣະອົງຊົງເລືອກສັນເອົາໄວ້ ສຳລັບວຽກງານອັນຍິ່ງໃຫຍ່ນີ້.

**EGW (Christ’s Object Lessons, p. 290)**